# ໂຮງຮຽນວັນອາທິດ
# ວັນອາທິດທີ 03 ພຶສຈິກາ 2019(11-03-2019 )

## ພຣະປະສົງຂອງພຣະເຈົ້າແລະຄຣິສຕະຈັກ

ຄຳແນະນຳອັນໃດທີ່ເຮັດໃຫ້ທ່ານດີໃຈຈົນທ່ານຈະບໍ່ເມີນເສີຍ?

**ຈຸດສຳຄັນໃນບົດຮຽນ**: ພຣະເຈົ້າເປີດເຜີຍແຜນການຂອງພຣະອົງຕໍ່ພວກເຮົາຜ່ານທາງຄຣິສຕະຈັກຂອງພຣະອົງ.
**ພຣະຄັມພີຕອບສນອງຕໍ່ຊີວິດ**:

ຄັ້ງນຶ່ງຂ້າພະເຈົ້າໄດ້ເວົ້າກັບຄຣິສຕຽນທີ່ເປັນນັກທຸຣະກິດນ້ອຍທີ່ລົ້ມລະລາຍ. ຫຼັງຈາກເຮັດທຸຣະກິດຕໍ່ອີກສອງສາມເດືອນຕໍ່ມາລາວກໍຍອມຈຳນົນໃນຄວາມທໍ້ໃຈ. ຈິດໃຈງຸດງິດ, ລາວໄດ້ຕໍ່ວ່າ " ຂ້າພະເຈົ້າໄດ້ອະທິຖານແລະຂໍຮ້ອງພຣະເຈົ້າໃຫ້ສຳແດງຕໍ່ຂ້າພະເຈົ້າຖ້າຂ້າພະເຈົ້າສົມຄວນເຮັດວຽກນັ້ນ, ແຕ່ຂ້າພະເຈົ້າບໍ່ໄດ້ຮັບຄຳຕອບແຕ່ຢ່າງໃດເລີຍ. ດັ່ງຂ້າພະເຈົ້າຈຶ່ງຕັດສິນໃຈເຮັດ." ຂ້າພະເຈົ້າຖາມ, " ພັນຣະຍາຂອງເຈົ້າຄິດຢ່າງໃດກ່ຽວກັບເຈົ້າເຮັດວຽກນັ້ນ?" " ນາງໄດ້ຂັດຄ້ານຕັ້ງແຕ່ເລີ່ມຕົ້ນເຮັດມາ," ລາວຕອບ. " ທ່ານໄດ້ມີເພື່ອນໆຮ່ວມອະທິຖານກັບທ່ານໃນເຣື່ອງນີ້ບໍ່?" ຂ້າພະເຈົ້າຖາມ. " ຂ້າພະເຈົ້າມີເພື່ອນໆຈາກຄຣິສຕະຈັກບາງຄົນມາອະທິຖານກັບຂ້າພະເຈົ້າກ່ຽວກັບເຣື່ອງນີ້. ຫຼາຍຄົນໃນພວກເຂົາໄດ້ຍົກຂໍ້ຄວາມກັງວົນ, ແຕ່ບໍ່ມີໃຜໃນພວກເຂົາບໍຣິຫານບໍຣິສັດໃຫ້ໄປຕາມນັ້ນ. ລູກຊາຍໜຸ່ມຂອງຂ້າພະເຈົ້າໄດ້ເວົ້າວ່າລາວຫວັງວ່າຂ້າພະເຈົ້າຈະບໍ່ທຳງານນັ້ນ. ແຕ່ລາວເປັນຄົນໜຸ່ມ. ມີຫັຍງແດ່ທີ່ລາວຮູ້ກ່ຽວກັບການບໍຣິຫານທຸຣະກິດ?

"ດັ່ງນັ້ນ," ຂ້າພະເຈົ້າຈຶ່ງເວົ້າວ່າ, "ເຈົ້າໄດ້ຂໍຮ້ອງໃຫ້ພຣະເຈົ້າໃຫ້ຄຳແນະນຳເຈົ້າແລະເຈົ້າກໍເມີນເສີຍທຸກໆສິ່ງທີ່ພຣະອົງໄດ້ກ່າວຜ່ານທາງຜູ້ເຊື່ອທີ່ພຣະອົງນຳເຂົ້າມາອ້ອມຮອບເຈົ້າ!" ນຶ່ງໃນຂອງຂວັນທີ່ຍິ່ງໃຫ່ຍພຣະເຈົ້າໃຫ້ກັບເຮົາແມ່ນຄຣິສຕະຈັກ.ພຣະເຈົ້າໃຊ້ກຸ່ມຜູ້ເຊື່ອກຸ່ມດຽວກັນຊ່ວຍພວກເຮົາໃຫ້ຈະເຣີນເຕີບໂຕແລະຮູ້ພຣະປະສົງຂອງພຣະອົງ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ສຶກສາພຣະຄັມພີ

### 1. <u>1 ໂກຣິນໂທ 12: 1- 3</u>

*1ພີ່ນ້ອງທັງຫລາຍເອີຍ, ເຮົາຢາກໃຫ້ພວກເຈົ້າເຂົ້າໃຈເຣື່ອງຂອງພຣະຣາຊທານຊຶ່ງມາຈາກພຣະວິນຍານນັ້ນ. 2ເຈົ້າທັງຫລາຍຮູ້ຢູ່ວ່າແຕ່ກ່ອນ,ເມື່ອພວກເຈົ້າຍັງເປັນຄົນນອກສາສນານັ້ນ ພວກເຈົ້າໄດ້ຖືກຊັກນຳໃຫ້ຫລົງໄປຫາພຣະທຽມທີ່ປາກບໍ່ເປັນ ຕາມທີ່ມີຜູ້ຊັກນຳໄປນັ້ນ. 3ເຫດສັນນັ້ນເຮົາຈຶ່ງບອກເຈົ້າທັງຫລາຍໃຫ້ຮູ້ວ່າ ບໍ່ມີໃຜທີ່ຈະເວົ້າດ້ວຍພຣະວິນຍານຂອງພຣະເຈົ້າຈະກ່າວວ່າ, "ຂໍໃຫ້ພຣະເຢຊູຖືກດ່າ" ແລະບໍ່ມີໃຜອາດເວົ້າໄດ້ວ່າ, "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ເວັ້ນໄວ້ແຕ່ຜູ້ທີ່ກ່າວໂດຍພຣະວິນຍານບໍຣິສຸດ.*

ນຶ່ງຂອງພື້ນຖານທີ່ສຳຄັນທີ່ພຣະເຈົ້າເວົ້າແມ່ນຜ່ານທາງມະນຸດ. ພວກເຮົາສາມາດເຮັດໃຫ້ອັນໃດອັນນຶ່ງເກີດຂຶ້ນໄດ້ຕາມທີ່ພວກເຮົາຕ້ອງການ, ຫຼືຈະສັບສົນໂດຍບັນຫາຂອງພວກເຮົາທີ່ເຮັດໃຫ້ພວກເຮົາຈຳບໍ່ໄດ້ວ່າເປັນການນຳພາຂອງພຣະເຈົ້າ. ໃນເຫດການເຫຼົ່ານີ້, ພຣະອົງອາດຈະໃຊ້ໃຜຜູ້ນຶ່ງຊ່ວຍພວກເຮົາໃຫ້ເຫັນແຜນການຂອງພຣະອົງ. ນີ້ບໍ່ໄດ້ໝາຍຄວາມວ່າຄົນໃດຄົນນຶ່ງເວົ້າແທນພຣະເຈົ້າ. ເພາະພຽງແຕ່ໃຜຜູ້ນຶ່ງເວົ້າວ່າ, " ຂ້າພະເຈົ້າຮູ້ວ່າພຣະເຈົ້າຕ້ອງ

ການໃຫ້ທ່ານເຮັດ." ບໍ່ໄດ້ໝາຍຄວາມວ່າບຸກຄົນນັ້ນຮູ້ຈິງໆ. ການຍອມຮັບຣິດອຳນາດຂອງພຣະຄຣິດຊົງສຳແດງຢູ່ ທັງໃນຄຳເວົ້າແລະຊີວິດຂອງຄົນນັ້ນ. ເຖິງແມ່ນວ່າ, ພວກເຮົາຕ້ອງການເຫັນວ່າຄຳເວົ້າຂອງລາວໄດ້ຈັດຕຽມດ້ວຍວິທີທາງອື່ນທີ່ພຣະເຈົ້າເວົ້າຕໍ່ເຮົາ, ໂດຍສະເພາະຢ່າງຍິ່ງແມ່ນຜ່ານທາງພຣະຄຳຂອງພຣະອົງ.

ໂປໂລໄດ້ຂຽນຈົດໝາຍເຖິງຄຣິສຕຽນໂກຣິນໂທຜູ້ທີ່ເຄີຍໄຫວ້ພຣະທຽມ. ເຖິງວ່າພຣະທຽມເຫຼົ່ານີ້ບໍ່ສາມາດເວົ້າໄດ້, ມັນຍັງນຳພາເຂົາໄປທາງຜິດ. ພຣະທຽມທີ່ບໍ່ສາມາດເວົ້າໄດ້ຊັກນຳເຂົາໄປໃນທາງຜິດໄດ້ຢ່າງໃດ? ເພາະຄົນທີ່ນິຍົມຂາບໄຫ້ວພຣະທຽມກໍບໍ່ເຄີຍພໍໃຈກັບການຕັດສິນໃຈຂອງຕົນເອງ. ເມື່ອພຣະເຈົ້າຂອງທ່ານບໍ່ສາມາດເວົ້າໄດ້. ແນ່ນອນສຽງທີ່ທ່ານໄດ້ຍິນກໍເປັນສຽງອັນທີ່ທ່ານຕ້ອງການ!

ໃນຄວາມແຕກຕ່າງ, ພຣະວິນຍານບໍຣິສຸດເປັນບຸກຄົນທີ່ມີຕົນມີຕົວຈິງໆເປັນຜູ້ທຳໜ້າທີ່ແນະນຳທາງມະນຸດ. ພຣະອົງບໍ່ໄດ້ບອກເຮົາຕລອດເວລາອັນໃດພວກເຮົາຕ້ອງການທີ່ຈະໄດ້ຍິນ. ແຕ່ພຣະອົງໄດ້ບອກກັບພວກເຮົາຕລອດວ່າອັນໃດທີ່ພວກເຮົາຈຳເປັນຕ້ອງໄດ້ຍິນ. ຖ້າພວກເຮົາເອົາໃຈໃສ່ຊີວິດຈິດວິນຍານຂອງເຮົາ, ພວກເຮົາສາມາດໄດ້ຮັບການໃຫ້ອະພັຍຂອງພຣະອົງ, ການຊົງນຳດ້ວຍຄວາມຮັກ.

ບົດບາດອັນແລກຂອງອົງພຣະວິນຍານບໍຣິສຸດແມ່ນເຮັດໃຫ້ເຮົາແນ່ໃຈວ່າພຣະເຢຊູເປັນອົງພຣະຜູ້ເປັນເຈົ້າແລະພຣະຜູ້ໂຜດໃຫ້ພົ້ນ. ພວກເຮົາຈະບໍ່ມີຄວາມຮູ້ສຶກວ່າຄວາມເຊື່ອຖືກແຍກອອກຈາກການທຳງານຂອງອົງພຣະວິນຍານບໍຣິສຸດ. ກົງກັນຂ້າມ. ທຸກໆຄົນຜູ້ທີ່ນຳພາໂດຍພຣະວິນຍານບໍຣິສຸດຈະບໍ່ເວົ້າດູໝິ່ນຫຼືປມາດສາສນາຫຼືປະຕິເສດພຣະຄຣິດ. ອີກອັນນຶ່ງພຣະວິນຍານບໍຣິສຸດຈະເຂົ້າມາຊົງສະຖິດຢູ່ໃນຊີວິດຂອງຄົນນັ້ນ. ໃນພຣະຄັມພີບໍ່ມີຂໍ້ມູນຫຼັກຖານໃດພິສູດວ່າເຮົາສາມາດເຮັດພຣະອົງອອກໄປ! ພວກເຮົາອາດເຮັດໃຫ້ພຣະອົງເສັຽພຣະທັຍໃນຄວາມບາບຂອງເຮົາ. (ເອເຟໂຊ 4:30) ແລະພວກເຮົາກີດກັ້ນການທຳງານຂອງພຣະອົງ (1 ເທຊະໂລນິກ 5:19), ແຕ່ພຣະອົງຢູ່ທີ່ນີ້ເພື່ອຈະຢູ່! ດັ່ງນັ້ນ, ເມື່ອຄົນຜູ້ນຶ່ງປະຕິຍານຕົນຈະເປັນຄຣິສຕຽນແຕ່ຫຼັງຈາກນັ້ນມາໄດ້ປະຕິເສດພຣະຄຣິດ. ນັ້ນເປັນຂໍ້ພິສູດໃຫ້ເຫັນວ່າເຂົາບໍ່ໄດ້ເຊື່ອຢ່າງແນ່ໃຈວ່າພຣະວິນຍານບໍຣິສຸດໄດ້ສະຖິດຢູ່ໃນເຂົາຕັ້ງແຕ່ເບື້ອງຕົ້ນແລ້ວ.

ພຣະເຈົ້າເວົ້າຜ່ານພຣະວັດຈະນະຂອງພຣະອົງ, ພຣະເຈົ້າເວົ້າກັບຈິດໃຈຂອງເຮົາຜ່ານທາງພຣະວິນຍານບໍຣິສຸດຂອງພຣະອົງ, ແລະພຣະອົງເວົ້າຕໍ່ພວກເຮົາຜ່ານທາງຜູ້ທີ່ຍອມຮັບແລະດຳລົງຊີວິດຢູໃນຄວາມຈິງວ່າ " ພຣະເຢຊູເປັນອົງພຣະຜູ້ເປັນເຈົ້າ" ( ຂໍ້ 3 ).

## 2. <u>1 ໂກຣິນໂທ 12: 4- 6.</u>

*4 ຂອງພຣະຣາຊທານນັ້ນມີຕ່າງໆກັນ ແຕ່ມີພຣະວິນຍານອົງດຽວກັນ 5 ງານຮັບໃຊ້ມີຕ່າງໆກັນ ແຕ່ມີພຣະຜູ້ເປັນເຈົ້າອົງດຽວກັນ 6 ການດຳເນີນງານມີຕ່າງໆກັນ ແຕ່ມີພຣະເຈົ້າອົງດຽວກັນຊົງເປັນຕົ້ນເຫດແຫ່ງການດຳເນີນງານຕ່າງໆນັ້ນໃນທຸກຄົນ*

ພຣະເຈົ້າມີຄວາມສາມາດກ່ຽວຂ້ອງຄວາມສັມພັນກັບມະນຸດໄດ້ໂດຍບໍ່ສິ້ນສຸດ.ການເດີນຂອງແຕ່ລະຄົນກັບພຣະເຈົ້າແມ່ນພຣະວິນຍານອົງດຽວກັນ. ແມ່ນມັນແມ່ນພຣະວິນຍານອົງດຽວກັນທີ່ທຳງານໃນຊີວິດຂອງທຸກໆຄົນ. ພຣະວິນຍານບໍ່ປ່ຽນແປງ, ແມ່ນພຣະອົງມີແບບລັກສະນະສາຍສຳພັນເປັນສ່ວນຕົວພິເສດ ເຂົາແຕ່ລະບຸກຄົນແລະມອບໝາຍໜ້າທີໃຫ້ໂດຍສະເພາະ. ໃນພຣະຄັມພີພາກພັນທະສັນຍາເດີມ, ພຣະວິນຍານບໍຣິສຸດມາເທິງເຂົາເຫຼົ່ານັ້ນເພື່ອຊ່ວຍນຳພາເຂົາໃຫ້ເຮັດໜ້າທີ່ມອບໝາຍໃຫ້ສຳເຣັດ ພຣະວິນຍານບໍຣິສຸດນຳພາແຊມຊັນໂດຍໃຫ້ມີກຳລັງທີ່ແຂງແກ່ນເພື່ອເອົາຊະນະປາເລສຕິນ. ພຣະວິນຍານບໍຣິສຸດນຳພາກະສັດດາວິດໃຫ້ທຳໜ້າທີ່ກະສັດ. ພຣະວິນຍານບໍຣິສຸດນຳພາພວກຜູ້ປະກາດພຣະທັມໃນການທຳນວາຍ. ເພາະແຕ່ລະຄົນໄດ້ຮັບຂອງພຣະຣາຊທານແຕກຕ່າງກັນ. ພຣະເຈົ້າຈັດຕຽມເຂົາໄວ້ໃຫ້ເປັນນຶ່ງດຽວ.

ໃນພຣະຄັມພີພາກພັນທະສັນຍາໃໝ່, ພຣະເຈົ້າຈັດຕຽມຄົນຂອງພຣະອົງໃນຄຣິສຕະຈັກ. ທຸກວັນນີ້, ຄຣິສຕະຈັກ

ທັງຫຼາຍມີຄວາມເຂົ້າໃຈວ່າໄດ້ຖືກນັບເຂົ້າໃນຈຳນວນຄຣິສຕະຈັກທ້ອງຖິ່ນທົ່ວທຸກມຸມໂລກ. ແຕ່ລະຄຣິສຕະຈັກທ້ອງຖິ່ນພ້ອມດ້ວຍສະມາຊິກແຕ່ລະຄົນເປັນພຣະກາຍຂອງພຣະຄຣິດ, ແລະສະມາຊິກແຕ່ລະຄົນໄດ້ຮັບໜ້າທີ່ມອບໝາຍ, ໃນພາກສ່ວນທີ່ແຕກຕ່າງກັນຂອງຄຣິສຕະຈັກຂອງພວກເຮົາຢ່າງຊັດເຈນ, ແຕ່ມັນຂຶ້ນຢູ່ດ້ວຍກັນແລະການຊ່ວຍເຫຼືອຊຶ່ງກັນແລະກັນ. ໃນພຣະກາຍຂອງພຣະຄຣິດ. ພຣະວິນຍານບໍຣິສຸດນຳພາພວກເຮົາແຕ່ລະຄົນສຳລັບພວກເຮົາສະແດງອອກໃນພຣະກາຍຂອງພຣະອົງ. ຂອງພຣະຣາຊທານບໍ່ແມ່ນເປັນຂອງປະທານໃຫ້ເຮົາໃຊ້ສະເພາະແຕ່ລະຄົນ; ແຕ່ເປັນຂອງພຣະຣາຊາທານເພື່ອເສີມສ້າງພຣະກາຍ.

ເມື່ອພຣະເຈົ້າຕ້ອງການທີ່ຈະເປີດເຜີຍແຜນການຂອງພຣະອົງຕໍ່ທ່ານ. ພຣະອົງອາດຈະໃຊ້ບາງພາກສ່ວນຂອງພຣະກາຍເຕືອນທ່ານໃຫ້ຮູ້ອັນໃດທີ່ພຣະອົງຕ້ອງການໃຫ້ເຮັດ ກຸ່ມຄົນທີ່ເຊື່ອພວກອື່ນຈະແຕກຕ່າງຈາກພວກທ່ານ ແຕ່ພຣະວິນຍານບໍຣິສຸດທີ່ຢູ່ໃນທ່ານແມ່ນພຣະວິນຍານອົງດຽວກັນທີ່ຢູ່ໃນເຂົາ.

ພຣະວິນຍານອົງດຽວກັນທີ່ຊົງສະຖິດຢູ່ໃນພວກທ່ານກໍຊົງສະຖິດຢູ່ໃນກຸ່ມຜູ້ເຊື່ອຄົນອື່ນໆເໝືອນກັນ. ບໍ່ຄວນປະເມີນຄ່າຕ່ຳເກີນໄປອັນໃດກໍຕາມທີ່ພຣະວິນຍານຕັດກັບທ່ານຜ່ານທາງຜູ້ເຊື່ອຄົນອື່ນ! ຮຽນຮູ້ຄວາມຮູ້ສຶກຝ່າຍຈິດວິນຍານເພື່ອທ່ານຈະຄົ້ນຫາເມື່ອພຣະວິນຍານບໍຣິສຸດໃຫ້ການນຳພາທ່ານຜ່ານທາງຜູ້ເຊື່ອ.

ພຣະວິນຍານບໍຣິສຸດຈະບໍ່ບອກທ່ານບາງສິ່ງບາງຢ່າງຜ່ານທາງຄຣິສຕຽນທີ່ຂັດແຍ້ງອັນໃດ ພຣະວິນຍານໄດ້ບອກທ່ານຫຼືສົນທະນາກັບທ່ານໂດຍກົງຜ່ານທາງຄຳເວົ້າຂອງພຣະອົງ. ຍິງໜຸ່ມຫຼາຍໆຄົນໄດ້ປະເຊີນໜ້າກັບຄວາມລຳບາກໃນການຕັດສິນໃຈໃນວັຍໜຸ່ມສາວທີ່ອ້າງວ່າພຣະເຈົ້າຕ້ອງການໃຫ້ເຂົາທັງສອງແຕ່ງງານ, ເຖິງແມ່ນວ່າພຣະວິນຍານບໍຣິສຸດບໍ່ເຄີຍບອກໃຫ້ຝ່າຍຍິງຮູ້ດ້ວຍຕົວນາງເອງ!

ພຣະວິນຍານບໍຣິສຸດອາດຈະຢືນຢັນສິ່ງທີ່ຜູ້ເຊື່ອໄດ້ບອກກັບທ່ານ, ແລະພຣະອົງອາດຈະເຕືອນທ່ານໃຫ້ລະມັດລະວັງກ່ຽວບາງຄົນທີ່ກຳລັງເວົ້າ. ອະທິຖານເພື່ອຄວາມສາມາດໃນການຕັດສິນໃຈແລະຮຽນຮູ້ເອົາໃຈໃສ່ຕໍ່ການຕັກເຕືອນຂອງພຣະວິນຍານ.

### 3. <u>1 ໂກຣິນໂທ 12: 7- 11</u>.

*7ການສະແດງຂອງພຣະວິນຍານນັ້ນມີແກ່ທຸກຄົນເພື່ອປໂຍດຮ່ວມກັນ. 8ພຣະເຈົ້າຊົງໂຜດປະທານໂດຍທາງພຣະວິນຍານ ໃຫ້ຜູ້ໜຶ່ງມີຖ້ອຍຄຳປະກອບດ້ວຍສະຕິປັນຍາ ແລະໃຫ້ອີກຜູ້ໜຶ່ງມີຖ້ອຍຄຳອັນປະກອບດ້ວຍວິຊາຄວາມຮູ້ ແຕ່ເປັນພຣະວິນຍານອົງດຽວກັນ. 9ແລະໃຫ້ອີກຜູ້ໜຶ່ງມີຄວາມເຊື່ອແຕ່ເປັນພຣະວິນຍານອົງດຽວກັນ ແລະໃຫ້ອີກຜູ້ໜຶ່ງມີອຳນາດໃຫ້ຄົນດີພະຍາດ ແຕ່ເປັນພຣະວິນຍານອົງດຽວກັນ. 10ແລະໃຫ້ອີກຜູ້ໜຶ່ງມີອຳນາດເຮັດການອິດທິຣິດາງ ແລະໃຫ້ອີກຜູ້ໜຶ່ງປະກາດພຣະທັມ, ແລະໃຫ້ອີກຜູ້ໜຶ່ງຮູ້ຈັກສັງເກດວິນຍານຕ່າງໆ ແລະໃຫ້ອີກຜູ້ໜຶ່ງປາກພາສາແປກໆ ແລະໃຫ້ອີກຜູ້ໜຶ່ງແປພາສາແປກໆ. 11ສິ່ງສາລະພັດເຫລົ່ານີ້ພຣະວິນຍານອົງດຽວກັນຊົງບັນດານ ແລະປະທານແກ່ທຸກຄົນຕາມຊອບພຣະທັຍຂອງພຣະອົງ.*

ເມື່ອທ່ານເຂົ້າມາເປັນຄຣິສຕຽນ, ທ່ານບໍ່ພຽງແຕ່ໄດ້ຮັບຂອງພຣະຣາຊະທານຝ່າຍວິດຍານຈາກພຣະພຣະວິນຍານບໍຣິສຸດເທົ່ານັ້ນ; ທ່ານຍັງໄດ້ຕ້ອນຮັບເອົາອົງພຣະວິນຍານ. ອົງພຣະວິນຍານທີ່ສາມາດປາກົດພຣະອົງໃນທຸກທີ່ໆພຣະອົງຕ້ອງການ, ຈິງແທ້, ພຣະອົງທຳໜ້າທີ່ຊ່ວຍເຫຼືອທ່ານໃນງານທີ່ພຣະເຈົ້າຊົງມອບໝາຍໃຫ້ໃຫ້ສຳເຣັດ. ພຣະວິນຍານບໍຣິສຸດນຳພາຂ້າພະເຈົ້າແລະພຣະອົງນຳພາທ່ານເຊັ່ນດຽວກັນ, ແນ່ນອນໃນວິທີທາງທີ່ພຣະອົງນຳພາພວກເຮົາແມ່ນແຕກຕ່າງກັນຢ່າງບໍ່ໜ້າເຊື່ອ. ພວກເຮົາຕ້ອງການຄວາມຫຼາກຫຼາຍຂອງຂອງພຣະຣາຊທານ, ເພາະມັນເປັນຂອງພຣະຣາຊທານທີ່ແຕກຕ່າງກັນ ນຶ່ງໃນພວກເຮົານຳເອົາຄວາມເປັນນຶ່ງດຽວໃນພັນທະກິດຂອງພວກເຮົາ ແລະການຮັບໃຊ້ທີ່ທຸກຄົນເຕີບໂຕແລະໃຫ້ກຽດພຣະຄຣິດ.

ອາຈານໂປໂລໄດ້ຂຽນລາຍລະອຽດບາງສ່ວນຂອງພຣະຣາຊທານຝ່າຍວິນຍານ, ແຕ່ບໍ່ໄດ້ລະອຽດທີ່ຖ້ວນ. ຕລອດ

ທັງປີ, ຫຼາຍຄົນໄດ້ພະຍາຍາມເຕີບໂຕຂອງປະທານໃນຄວາມແຕກຕ່າງ, ແຕ່ບາງທີ່ວິທີງ່າຍໆແມ່ນຢູ່ໃນສີ່ໝວດນີ້.

- **ຂອງປະທານໃຫ້ການຊ່ວຍເຫຼືອ.** ຂອງພຣະຣາຊທານເຊັ່ນການຊ່ວຍເຫຼືອແລະການນໍາພາການທໍາງານຂອງຄຣິສຕະຈັກແລະຊ່ວຍໃຫ້ຈົບສໍາເຣັດ( 1ໂກຣິນໂທ 12:28).
- **ຂອງປະທານໃຫ້ການແບ່ງປັນ.** ຂອງພຣະຣາຊະທານເຊັ່ນການສະແດງຄວາມເມດຕາແລະການໃຫ້ການບໍຣິຈາກດ້ວຍຄວາມຊັດເຈນໃນການສິ່ງຕໍ່ຄວາມຮັກຂອງພຣະເຈົ້າຕໍ່ຄົນອື່ນ ( ໂຣມ 12:8; 1 ເປໂຕ 4:9).
- **ຂອງປະທານໃຫ້ການເທສນາ.** ຂອງພຣະຣາຊທານເຊັ່ນການສິດສອນແລະການທໍານວາຍການເຕີບໂຕຂອງຄຣິສຕະຈັກໃນພຣະຄໍາຂອງພຣະເຈົ້າ ( 12: 8).
- **ຂອງປະທານໃຫ້ສ່ວນເພີ້ມເຕີມ.** ຂອງພຣະຣາຊທານເຊັ່ນສະຕິປັນຍາ, ຄວາມຮູ້, ແລະຄວາມເຊື່ອໃຫ້ການຊ່ວຍເຫຼືອຂອງພຣະຣາຊທານອື່ນໆ.

ເປັນສິ່ງທີ່ດີຍອດຍ້ຽມກ່ຽວກັບການຈັດລາຍລະອຽດຂອງພຣະຣາຊທານທີ່ມີຫຼາຍປະເພດ. ແລະພຣະເຈົ້າກໍໃຫ້ແຕ່ລະຄົນຫຼາຍກ່ວານຶ່ງອັນ, ຮວມກັນເຂົ້າແລະໃຊ້ຂອງປະທານເຫຼົ່ານັ້ນຮ່ວມກັນໃນຫຼາຍວິທີທາງພວກເຮົາສາມາດຮັບໃຊ້ພຣະຄຣິດແລະຄຣິສຕະຈັກ ພວກເຮົາເລືອກຈັດໝວດໝູ່ຂອງພຣະປະທານບໍ່ມີຄວາມສໍາຄັນຢ່າງໃດ. ອາຈານໂປໂລບໍ່ເຄີຍຈໍາແນກຂອງປະທານ, ທ່ານບໍ່ໄດ້ສ້າງລາຍການລາຍລະອຽດຖ້ວນຖີ່ຂອງປະທານຝ່າຍວິນຍານແມ້ນອັນນຶ່ງ ອາຈານໂປໂລສຸມໃຈໃສ່ສົນໃຈແຕ່ຈຸດປະສົງເປົ້າໝາຍຂອງໆປະທານ: “ ການສະແດງໃຫ້ເຫັນຂອງປະທານຝ່າຍພຣະວິນຍານຢ່າງລະອຽດໃຫ້ບຸກຄົນນຶ່ງກໍເພື່ອການທໍາປໂຍດອັນດີ “ ( 1 ໂກຣິນໂທ 12: 7 ).

ພັນລະຍາຂ້າພະເຈົ້າ ລີສາແລະຂ້າພະເຈົ້າມີລັກສະນະກົງກັນຂ້າມໃນທຸກການທົດລອງເປັນສ່ວນຕົວທີ່ພວກເຮົາເຄີຍເຮັດ. ຂ້າພະເຈົ້າເປັນ “ ຜູ້ຄິດ" ແລະນາງເປັນ " ຜູ້ຮູ້ສຶກ" ຜົນທີ່ປະກົດອອກມາ, ຄວາມຄ້າຍຄືກັນຂອງຊີວິດພວກເຮົາແຕກຕ່າງກັນຢ່າງສິ້ນເຊີງ, ແມ່ນພວກເຮົາໄດ້ຮູ້ເຣື່ອງນັ້ນ, ດ້ວຍການທໍາງານຮ່ວມກັນ ພວກເຮົາສາມາດທໍາດີເພື່ອຄົນອື່ນໄດ້ຫຼາຍກວ່າເຮົາເຮັດພຽງແຕ່ງຕົວເຮົາເອງເທົ່ານັ້ນ. ດັ່ງນັ້ນກໍເຊັ່ນດຽວກັບຄຣິສຕະຈັກ.

## ນໍາໃຊ້ໃນຊີວິດ.

ຊີວິດຝ່າຍຈິດຍານທ່ານສົນໃຈທີ່ຈະໄດ້ຍິນພຣະສຸຣະສຽງຂອງພຣະເຈົ້າທັງໆທີຄົນອື່ນເປັນຜູ້ເວົ້າບໍ່? ຈົ່ງພິຈາຣະນາຕິດຕາມເບິ່ງແບບວິທີການນໍາໃຊ້ຂ້າງລຸ່ມນີ້.

- **ສະທ້ອນໃຫ້ເຫັນ.** ຈົ່ງໃຊ້ເວລາຄິດກ່ຽວກັບອັນໃດທີ່ພຣະເຈົ້າອາດເວົ້າກັບທ່ານຜ່ານທາງຄົນອື່ນ. ຂອບຄຸນພຣະເຈົ້າສໍາລັບຜູ້ເຊື່ອທີ່ພຣະອົງໃຫ້ຢູ່ອ້ອມຮອບທ່ານເພື່ອເດີນຄຽງຂ້າງທ່ານ.
- **ອະທິຖານ.** ຈົ່ງສືບຕໍ່ອະທິຖານເພື່ອຄວາມຕ້ອງການແລະການຕັດສິນໃຈຂອງບຸກຄົນທີ່ມີຊື່ໃນສມຸດບັນທຶກ. ອະທິຖານທົ່ວໄປແລະສະເພາະເຈາະຈົງເພື່ອເຂົາຈະເຫັນອັນໃດທີ່ພຣະເຈົ້າປາຖນາແລະເຊື່ອຟັງຕິດຕາມແຜນການຂອງພຣະເຈົ້າ.
- **ຮັບໃຊ້.** ໃຊ້ຂອງພຣະຣາຊທານທີ່ພຣະເຈົ້າໃຫ້ທ່ານຮັບໃຊ້ພຣະກາຍຂອງພຣະອົງ. ທ່ານບໍ່ຮູ້ວ່າອັນໃດຄືຂອງປະທານຂອງທ່ານທີ່ຈະໃຊ້ໃນງານຮັບໃຊ້ນັ້ນ; ໃຫ້ເວລາແລະປະສົບການຂອງທ່ານນໍາຈິດໃຈຂອງທ່ານໄປທີ່ນັ້ນແລະແລ້ວຂອງປະທານຂອງທ່ານທີ່ມີຈະສະແດງໃຫ້ເຫັນໃນໂຕມັນເອງ.

ນຶ່ງໃນວິທີທາງທີ່ພຣະເຈົ້າຕັດຕໍ່ໄພ່ພົນຂອງພຣະອົງສ່ວນຫຼາຍແມ່ນຕັດຜ່ານທາງຜູ້ເຊື່ອຄົນອື່ນ. ຢ່າເປັນຄືຄຣິສຕຽນນັກທຸຣະກິດຜູ້ທີ່ປະຕິເສດຄໍາບອກເລົ່າພຣະເຈົ້າຜ່ານທາງຄົນອື່ນ. ແທນທີ່, ຈົ່ງຕັ້ງໃຈໃສ່ຕໍ່ທຸກວິທີທາງພຣະເຈົ້າຕັກເຕືອນແນະນໍາທ່ານ ຮວມທັງວິທີທາງຜ່ານທາງໄພ່ພົນຂອງພຣະອົງ.